# ທ່ານຈະຄົ້ນພົບໄດ້ຢ່າງໃດວ່າ ພະຜູ້ສ້າງຮຽກຮ້ອງສິ່ງໃດ

***ຂໍ້ຄວາມສຳຄັນອັນໃດທີ່ບັນຈຸໄວ້ໃນຄຳພີໄບເບິນ? (1)***

***ໃຜເປັນຜູ້ປະພັນຄຳພີໄບເບິນ? (2)***

***ເປັນຫຍັງທ່ານຄວນສຶກສາຄຳພີໄບເບິນ? (3)***

1. ຄຳພີໄບເບິນເປັນຂອງປະທານອັນລ້ຳຄ່າຈາກພະຜູ້ສ້າງ. ຄຳພີໄບເບິນເປັນເຫມືອນຈົດຫມາຍທີ່ມາຈາກພໍ່ທີ່ມີຄວາມຮັກເຖິງພວກລູກຂອງເຂົາ. ຄຳພີໄບເບິນບອກເຮົາເຖິງຄວາມຈິງກ່ຽວກັບພະຜູ້ສ້າງ—ພະອົງເປັນຜູ້ໃດ ແລະມາດຕະຖານຂອງພະອົງເປັນແນວໃດ? ຄຳພີໄບເບິນອະທິບາຍເຖິງວິທີທີ່ຈະຈັດການກັບບັນຫາຕ່າງໆ ແລະວິທີທີ່ຈະພົບຄວາມສຸກອັນແທ້ຈິງ. ຄຳພີໄບເບິນເທົ່ານັ້ນທີ່ບອກເຮົາໃຫ້ຮູ້ວ່າ ເຮົາຈຳຕ້ອງເຮັດສິ່ງໃດເພື່ອໃຫ້ພະເຈົ້າພໍພະໄທ.—ຄຳເພງ 1:1-3; ເອຊາອີ 48:17, 18.

2. ຄຳພີໄບເບິນຖືກຂຽນຂຶ້ນໂດຍມະນຸດຕ່າງໆຖານະອາຊີບປະມານ 40 ຄົນເປັນໄລຍະເວລາປະມານ 1,600 ປີ ໂດຍເລີ່ມຕົ້ນໃນປີ 1513 ກ່ອນສາກົນສັກກະຫລາດ ຄຳພີໄບເບິນປະກອບດ້ວຍຫນັງສືນ້ອຍໆ 66 ເຫລັ້ມ. ຄົນເຫລົ່ານັ້ນທີ່ໄດ້ຂຽນຄຳພີໄບເບິນໄດ້ຮັບການດົນໃຈຈາກພະຜູ້ສ້າງ. ພວກເຂົາໄດ້ຂຽນຄວາມຄິດຂອງພະອົງ ບໍ່ແມ່ນຄວາມຄິດຂອງຕົນເອງ. ດັ່ງນັ້ນພະຜູ້ສ້າງຜູ້ສະຖິດໃນສະຫວັນ ແລະບໍ່ແມ່ນມະນຸດຄົນຫນຶ່ງຄົນໃດເທິງແຜ່ນດິນໂລກ ເປັນຜູ້ປະພັນຄຳພີໄບເບິນ.—2 ຕີໂມເຕ 3:16, 17; 2 ເປໂຕ 1:20, 21.

3. ພະເຈົ້າໄດ້ດູແລໃຫ້ຄຳພີໄບເບິນຖືກຄັດລອກ ແລະສະຫງວນໄວ້ຢ່າງຖືກຕ້ອງ. ມີການພິມຄຳພີໄບເບິນຫລາຍກວ່າຫນັງສືອື່ນຈະເປັນເຫລັ້ມໃດກໍແລ້ວແຕ່. ບໍ່ແມ່ນທຸກຄົນຈະດີໃຈທີ່ເຫັນທ່ານສຶກສາຄຳພີໄບເບິນ ແຕ່ວ່າຢ່າໃຫ້ສິ່ງນັ້ນເຮັດໃຫ້ທ່ານຢຸດ. ອະນາຄົດອັນບໍ່ມີທີ່ສິ້ນສຸດຂອງທ່ານຂຶ້ນຢູ່ກັບການທີ່ທ່ານຮູ້ຈັກພະຜູ້ສ້າງແລະເຮັດຕາມນ້ຳພະໄທຂອງພະອົງແມ່ນວ່າຈະມີການຂັດຂວາງໃດໆ ກໍຕາມ.—ມັດທາຽ 5:10-12; ໂຍຮັນ 17:3.

